# ແຜນຍຸດທະສາດ ໃຫ້ການສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ ໃນ ສປປ ລາວ, 1 ມັງກອນ 2007– 31 ທັນວາ 2010

## ວິໄສທັດ: ຫຼຸດຈຳນວນຜູ້ປະສົບເຄາະຮ້າຍຈາກລະເບີດບໍ່ທັນແຕກ ໂດຍການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງໃນ ສ ປ ປ ລາວ ໃນການປະຕິບັດເປົ້າໝາຍຍຸດທະສາດການຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແບບຍືນຍົງ

| ເປົ້າໝາຍ | ຈຸດປະສົງ | ກິດຈະກຳ | ພາກສ່ວນຮັບຜິດຊອບ |
|---|---|---|---|
| 1. ເປົ້າໝາຍຍຸດທະສາດການຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແມ່ນແນໃສ່ພື້ນທີ່ທີ່ມີຄວາມສ່ຽງໄພສູງ ແລະ ບັນດາກຸ່ມຄົນທີ່ມີການສ່ຽງໄພສູງ. | ກ. ເພື່ອກຳນົດເຂດຊຸມຊົນທີ່ໄດ້ຮັບຜົນກະທົບຢ່າງຮ້າຍແຮງ ແລະ ກຸ່ມຄົນທີ່ສ່ຽງໄພສູງ<br>ຂ. ໃຫ້ການສຶກສາຄວາມສ່ຽງໄພໃນກຸ່ມຄົນທີ່ມີການສ່ຽງໄພສູງ.<br>ຄ. ເພີ່ມຈິດສຳນຶກກ່ຽວກັບ ລບຕ ແລະ ເພີ່ມການປ່ຽນແປງພຶດຕິກຳໃນກຸ່ມຄົນທີ່ສ່ຽງໄພສູງ<br>ງ. ໃຫ້ຄວາມສຳຄັນໃນການມີສ່ວນຮ່ວມດ້ານບົດບາດຍິງ-ຊາຍໃນກິດຈະກຳ ການສຶກສາຄວາມສ່ຽງໄພຈາກ ລບຕ.<br>ຈ. ສົ່ງເສີມໃຫ້ເອົາຄວາມຮັບຜິດໂດຍ ຊອບໂດຍໄວ ຕໍ່ການສະເໜີຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອໃຫ້ມີການເກັບກູ້ ຫຼື ທຳລາຍ ລບຕ.<br>ສ. ເອື້ອອຳນວຍໃຫ້ມີການລາຍງານຢ່າງຮີບດ່ວນ ໃນກໍລະນີທີ່ມີການເຈັບຫຼືເສຍຊີວິດ ຈາກ ລບຕ ໃນທ້ອງຖິ່ນ. | I. ວິເຄາະຂໍ້ມູນກ່ຽວກັບພຶດຕິກຳຄວາມສ່ຽງໄພທີ່ມີຢູ່ແລ້ວ ແລະ ວິເຄາະຂໍ້ມູນກ່ຽວກັບຜູ້ປະສົບເຄາະຮ້າຍ ເພື່ອກຳນົດເຂດພື້ນທີ່ທີ່ສ່ຽງໄພສູງ ແລະ ບັນດາກຸ່ມຄົນສ່ຽງໄພ, ເພື່ອກຳນົດຢ່າງແນ່ນອນກ່ຽວກັບ ຜູ້ຈົງໃຈ ກະທຳຄວາມສ່ຽງໄພ ແລະ ບໍ່ຈົງໃຈກະທຳການສ່ຽງໄພ ;<br>II. ນຳໃຊ້ຄຳຄິດເຫັນຈາກບົດປະເມີນຜົນ ກ່ຽວກັບຄວາມຕ້ອງການ ດ້ານການສຶກສາຄວາມສ່ຽງໄພຈາກ ລບຕ(ເດືອນ ຕຸລາ 2006) ເພື່ອນຳໃຊ້ເຂົ້າໃນ ການອອກແບບແຜນງານ ແລະ ການກວດຕິດຕາມ<br>III. ພັດທະນາຂໍ້ຄວາມ ແລະ ອຸປະກອນ ກ່ຽວກັບການໃຫ້ການສຶກສາຄວາມສ່ຽງໄພ ຄືນໃໝ່ ໂດຍປັບປຸງເປັນພາສາທ້ອງຖິ່ນທີ່ເໝາະສົມ ໃຫ້ສອດຄ່ອງກັບກົດໝາຍແຫ່ງ ສ ປ ປ ລາວ, ການມີສ່ວນຮ່ວມຂອງບົດບາດຍິງຊາຍ ແລະ ການປະຕິບັດຕົວຈິງໃນພາກພື້ນ, ເພື່ອກຳນົດກຸ່ມຄົນທີ່ມີຄວາມສ່ຽງໄພສູງ ລວມທັງຊາວນາ ແລະ ຜູ້ທີ່ເກັບເຫຼັກເສດເພື່ອຂາຍ ຫຼື ຜູ້ຊື້ເຫຼັກເສດ ;<br>IV. ທົບທວນຄືນ ຂັ້ນຕອນການຕອບສະໜອງ ການທຳລາຍແລະເກັບກູ້ ຕາມການລາຍງານຂອງຊຸມຊົນ ພ້ອມທັງໂຄສະນາໃຫ້ຊຸມຊົນເຂົ້າໃຈຂັ້ນຕອນການລາຍງານ ເພື່ອຮັບປະກັນວ່າ ການລາຍງານນັ້ນຖືກຮັບຜິດຊອບໂດຍພະນັກງານເກັບກູ້ ແລະ ທຳລາຍ<br>V. ສົ່ງເສີມ ແລະ ເອື້ອອຳນວຍ ໃຫ້ອຳນາດການປົກຄອງທ້ອງຖິ່ນ ເພື່ອລາຍງານ ຜູ້ທີ່ບາດເຈັບ ຫຼືເສຍຊີວິດ ຈາກ ລບຕ ແລະ ຮັບປະກັນວ່າທຸກໆເຫດການກ່ຽວກັບ ລບຕ ໄດ້ຖືກລາຍງານໃຫ້ຜູ້ເກັບກຳຂໍ້ມູນ, ໜ່ວຍງານລະບົບຂໍ້ມູນຜູ້ປະສົບເຄາະຮ້າຍແຫ່ງຊາດ | -NRA ໂດຍການສະໜັບສະໜູນຈາກສະມາຊິກ ຄະນະວິຊາການການໃຫ້ການສຶກສາຄວາມສ່ຽງໄພ(TWG members)<br>-ໜ່ວຍງານ ໃຫ້ການສຶກສາຄວາມສ່ຽງໄພ ແລະ ຜູ້ດຳເນີນກິດຈະກຳດັ່ງກ່າວ<br>-ຄຄຊ ໂດຍການຮ່ວມມືຂອງ ຄະນະວິຊາການໃຫ້ການສຶກສາຄວາມສ່ຽງໄພ, ຜູ້ດຳເນີນການໃຫ້ການສຶກສາຄວາມສ່ຽງໄພ, ຊຸມຊົນສ່ຽງໄພ, ກະຊວງຖະແຫຼງຂ່າວແລະວັດທະນະທຳ<br>-ຄະນະວິຊາການຂອງ ຄຄຊ ແລະ ຜູ້ດຳເນີນວຽກງານກ່ຽວກັບ ລບຕ.<br>-ຄຄຊ, ຜູ້ດຳເນີນວຽກງານກ່ຽວກັບ ລບຕ, ອຳນາດການປົກຄອງທ້ອງຖິ່ນ ແລະ ໜ່ວຍງານລະບົບຂໍ້ມູນຜູ້ປະສົບເຄາະຮ້າຍແຫ່ງຊາດ |

| | | | |
|---|---|---|---|
| 2. ໃຫ້ມີແຜນງານການໃຫ້ການສຶກສາຄວາມສ່ຽງໄພແບບຍືນຍົງ. | ກ. ເພື່ອເຊື່ອມສານກິດຈະການ ໃຫ້ການສຶກສາຄວາມສ່ຽງໄພ ເຂົ້າໃນບັນດາແຜນການ, ໂຄງການບູລິມະສິດ ແລະ ງົບປະມານ ຂອງລັດຖະບານ.<br>ຂ. ເພື່ອເຊື່ອມກິດຈະການໃຫ້ການສຶກສາຄວາມສ່ຽງໄພ ເຂົ້າໃນແຜນການ ແລະ ກິດຈະກຳ ຕ່າງໆ<br>ຄ.ເພື່ອກຳນົດແຫລ່ງທຶນຕ່າງໆ ສຳລັບກິດຈະການ ໃຫ້ການສຶກສາຄວາມສ່ຽງໄພ.<br>ງ. ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ໃຫ້ມີຄວາມຮັບຜິດ ຊອບຕໍ່ບັນຫາ ລບຕ ທີ່ມີຜົນກະທົບຕໍ່ສັງຄົມ<br>ຈ. ເພື່ອຮັບປະກັນວ່າ ລັດຖະບານລາວມີຄວາມເຂົ້າໃຈ ແລະ ຮັບຜິດຊອບກັບກິດຈະການ ລບຕ ໂດຍອີງຕາມສົນທິສັນຍາສາກົນ ແລະ ກົດໝາຍແຫ່ງຊາດ. | I) ສະເໜີ ພາກສ່ວນລັດ ຂັ້ນສູນກາງ ແລະ ຂັ້ນແຂວງ ເພື່ອບັນຈຸເອົາກິດຈະການໃຫ້ການສຶກສາຄວາມສ່ຽງໄພ ເຂົ້າໃນບັນດາແຜນການພັດທະນາ ແລະ ແຜນງົບປະມານ;<br>II) ສະເໜີ ແລະ ປຶກສາຫາລືກັບບັນດາອົງການຜູ້ໃຫ້ທຶນ ແລະ ອົງການຮ່ວມພັດທະນາຕ່າງ ໆ ກ່ຽວກັບຄວາມສຳຄັນຂອງ ການໃຫ້ການສຶກສາຄວາມສ່ຽງໄພ ຂອງລະເບີດບໍ່ທັນແຕກ ຊຶ່ງແມ່ນ ຫົວຂໍ້ທີ່ຄັດເລືອກໃນການວາງແຜນ, ການຈັດສັນງົບປະມານ ແລະ ການຕິກລົງຮ່ວມກັນ;<br>III) ສືບຕໍ່ສະໜັບສະໜູນ ແລະ ຂະຫຍາຍ ກິດຈະການໃຫ້ການສຶກສາຄວາມສ່ຽງໄພ ໃນຫຼັກສູດການສອນໃນໂຮງຮຽນ ແລະ ພັດທະນາຕື່ມເພື່ອແນໃສ່ຊາວໜຸ່ມທີ່ບໍ່ໄດ້ເຂົ້າໂຮງຮຽນ<br>IV) ພັດທະນາ ແລະ ປະຕິບັດໂຄງການທົດລອງກ່ຽວກັບ ການໃຫ້ການສຶກສາຄວາມສ່ຽງໄພ ຕໍ່ພໍ່ແມ່ຂອງເດັກ.<br>V) ສືບຕໍ່ສົ່ງເສີມ ແລະ ພັດທະນາບັນດາໂຄງການ ທີ່ອີງໃສ່ແຜນ ຍຸດທະສາດທ້ອງຖິ່ນ ແລະ ຊຸກຍູ້ໃຫ້ຊຸມຊົນມີຄວາມຮັບຜິດຊອບ ໃນກິດຈະການ ການຄຸ້ມຄອງ ແລະ ຫຼຸດຜ່ອນ ຄວາມສ່ຽງໄພ ຈາກ ລບຕ<br>VI) ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ໃຫ້ດຳເນີນງານໂດຍອີງຕາມ ກົດໝາຍແຫ່ງຊາດ ແລະ ກົດໝາຍສາກົນ ວ່າດ້ວຍ ອາວຸດ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ | -ບັນດາອົງການ ສປຊ, NRA, ອົງການໃຫ້ທຶນລວມທັງຂະບວນການໂຕະມົນ.<br>-ບັນດາອົງການ ສປຊ, NRA, ອົງການໃຫ້ທຶນລວມທັງຂະບວນການໂຕະມົນຂອງຜູ້ໃຫ້ທຶນ.<br>- ກະຊວງສຶກສາ, ອົງການ ການສຶກສາໂລກ/ຄອບຊອັກຊຽນ<br>- ຄຄຊ, ຜູ້ໃຫ້ທຶນ, ກອງທຶນນາໆຊາດສຳລັບເດັກ ແລະ ອົງການສາກົນຄົນພິການ ແຫ່ງ Belgium<br>- ຜູ້ປະຕິບັດວຽກງານການໃຫ້ການສຶກສາຄວາມສ່ຽງໄພ, ຄຄຊ ແລະ ຜູ້ໃຫ້ທຶນ<br>- ຄຄຊ, ອົງການສະຫະປະຊາຊາດຕ່າງໆ, ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ |
| 3. ໃຫ້ມີ ການປະສານງານ ແລະ ຄຸ້ມຄອງຢ່າງມີປະສິດທິພາບໃນວຽກງານການໃຫ້ການສຶກສາຄວາມສ່ຽງໄພ ຈາກລະເບີດບໍ່ທັນແຕກ (ລບຕ). | ກ. ເພື່ອພັດທະນາຄວາມສາມາດ ໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ກ່ຽວກັບລະເບີດບໍ່ທັນແຕກ ໃນການປະສານງານ ແລະ ຄຸ້ມຄອງກິດຈະການ ໃຫ້ການສຶກສາຄວາມສ່ຽງ ໄພຈາກລະເບີດບໍ່ທັນແຕກ ແຫ່ງ ຊາດ.<br>ຂ. ເພື່ອສ້າງຄວາມສາມາດ ໃຫ້ອຳນາດການປົກຄອງຂັ້ນທ້ອງຖິ່ນ ໃນການປະສານງານ ກັບຊຸມຊົນທ້ອງ | i) ປະເມີນການພັດທະນາຄວາມສາມາດຂອງ ຄຄຊ ໃນການປະສານງານ ແລະ ການຄຸ້ມຄອງ ການໃຫ້ການສຶກສາຄວາມສ່ຽງໄພ, ການພັດທະນາ ແລະ ການປະຕິບັດ ແຜນການສ້າງຄວາມເຂັ້ມແຂງ<br>ii) ສ້າງແຜນ ແລະ ບົດລາຍງານປະຈຳປີ ກ່ຽວກັບ ການໃຫ້ການສຶກສາການສ່ຽງໄພ ຊຶ່ງລວມທັງ ແຜນວຽກຂອງ ຄຄຊ ແລະ ກິດຈະການ ໃຫ້ການສຶກສາຄວາມສ່ຽງໄພ ຂອງທຸກອົງການ<br>iii) ອຳນວຍຄວາມສະດວກ ແລະ ເປີດກອງປະຊຸມ ໃຫ້ການສຶກສາຄວາມສ່ຽງໄພ TWG ກັບອຳນາດການປົກຄອງທ້ອງຖິ່ນ.<br>iv) ທົບທວນຄືນ ແລະ ພັດທະນາພາລະໜ້າທີ່ ຄະນະວິຊາການ ໃຫ້ການສຶກສາຄວາມສ່ຽງໄພ ໂດຍຮ່ວມມືກັບສະມາຊິກພາຍໃນກຸ່ມ. | - ຄຄຊ, MAG, Unicef<br>- ຄຄຊ ໂດຍການຊຸກຍູ້ຈາກ ອົງການປະຕິບັດ ການໃຫ້ການສຶກສາຄວາມສ່ຽງໄພ<br>- NRA ໂດຍການຊຸກຍູ້ຂອງ MAG ແລະ Unicef<br>- ຄຄຊ ແລະ ຄະນະວິຊາການ ໃຫ້ການສຶກສາຄວາມສ່ຽງໄພ<br>- ຄຄຊ, ແລະ ຫ້ອງການ ຄະນະກຳມະການຊີ້ນຳຂັ້ນແຂວງ ກ່ຽວກັບ ລບຕ ແລະ ອົງການໃຫ້ການສຶກສາຄວາມສ່ຽງໄພຕ່າງໆ |

| | | | |
|---|---|---|---|
| | ຖິ່ນເອງ ແລະ ໂຄງການໃຫ້ການ ສຶກສາຄວາມສ່ຽງໄພ ໃນໂຮງຮຽນ<br>ຄ. ເພື່ອຊຸກຍູ້ ການລວບລວມ, ປ້ອນຂໍ້ມູນ, ເຮັດໃຫ້ຂໍ້ມູນກ່ຽວກັບ ຜູ້ບາດເຈັບຫຼືເສຍຊີວິດ ຈາກ ລບຕ ຖືກພັດທະນາເລື້ອຍໆ, ຮັບປະກັນ ໃຫ້ການວິເຄາະຂໍ້ມູນ ແລະ ການນໍາ ໃຊ້ເພື່ອ ການວາງແຜນ ແລະ ກວດຕິດຕາມ ໂຄງການ. | v) ຊຸກຍູ້ອໍານາດການປົກຄອງທ້ອງຖິ່ນ ໃນການກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າໃນການໃຫ້ການສຶກສາຄວາມສ່ຽງໄພ ຈາກ ລບຕ.<br>vi) ຊຸກຍູ້ອໍານາດການປົກຄອງທ້ອຖິ່ນ ໃຫ້ຮູ້ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເອງ ໃນການຄຸ້ມຄອງ ໂຄງການ ໃຫ້ການສຶກສາຄວາມສ່ຽງໄພ<br>vii) ຊຸກຍູ້ ອໍານາດການປົກຄອງທ້ອງຖິ່ນ ໃຫ້ມີການເຊື່ອມໂຍງ ວຽກງານ ໃຫ້ການສຶກສາຄວາມສ່ຽງໄພ ເຂົ້າກັບໂຄງການອື່ນ, ຊຶ່ງລວມທັງວຽກງານ ຂະແໜງສຶກສາ, ສາທາ ແລະ ວຽກງານແມ່ຍິງ.<br>viii) ເຂົ້າຮ່ວມການສໍາມະນາ ກ່ຽວພັນກັບວຽກງານພັດທະນາ, ການດໍາເນີນງານ ແລະ ການນໍາໃຊ້ລະບົບຂໍ້ມູນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ | - ຄຄຊ, ແລະ ຫ້ອງການ ຄະນະກໍາມະການຊີ້ນໍາຂັ້ນແຂວງ ກ່ຽວກັບ ລບຕ ແລະ ອົງການໃຫ້ການສຶກສາຄວາມສ່ຽງໄພ<br>- ສະຫະພັນແມ່ຍິງ, ສູນກາງຊາວໜຸ່ມ, ກອງທຶນກໍ່ສ້າງແຫ່ງຊາດ, ກະຊວງ ແຜນການ ແລະ ການລົງທຶນ,<br>- ຄຄຊ, ອົງການ ໃຫ້ການສຶກສາຄວາມສ່ຽງໄພ |
| 4. ການຕິດຕາມ ຢ່າງມີປະສິດທິພາບ ໃນ ວຽກງານ ໃຫ້ການ ສຶກສາຄວາມສ່ຽງໄພ ຈາກລະເບີດບໍ່ທັນ ແຕກ | ກ. ເພື່ອສ້າງແລະ ຄຸ້ມຄອງ ລະບົບ ການລາຍງານຂັ້ນສູນກາງກ່ຽວກັບ ກິດຈະກໍາ ໃຫ້ການສຶກສາ ຄວາມ ສ່ຽງໄພ.<br>ຂ. ເພື່ອສ້າງລະບົບກວດຕິດຕາມ ແຫ່ງຊາດ ໃນການຕິດຕາມບັນດາ ໂຄງການໃຫ້ການສຶກສາ ຄວາມສ່ຽງ ໄພ ຈາກລະເບີດບໍ່ທັນແຕກ. | i) ກໍານົດພື້ນທີ່ ບ່ອນທີ່ໄດ້ດໍາເນີນກິດຈະກໍາ ໃຫ້ການສຶກສາຄວາມສ່ຽງໄພ ແລະ ພັດທະນາລະບົບລາຍງານ ກິດຈະການ ການໃຫ້ການສຶກສາຄວາມສ່ຽງໄພ ເພື່ອສະດວກໃນ ການເກັບກໍາຂໍ້ມູນຂັ້ນສູນກາງ<br>ii) ລວບລວມບົດລາຍງານ ຈາກຜູ້ປະຕິບັດງານ ໃຫ້ການສຶກສາຄວາມສ່ຽງໄພ ໂດຍລວບລວມບັນດາຂໍ້ມູນນັ້ນ ໃຫ້ເຂົ້າໃຈແຈ້ງ ໃນວຽກງານ ໃຫ້ການສຶກສາຄວາມສ່ຽງໄພ ໃນ ລາວ.<br>iii) ພັດທະນາລະບົບກວດຕິດຕາມກິດຈະການ ໃຫ້ການສຶກສາຄວາມສ່ຽງໄພ ແຫ່ງຊາດ ແລະ ປະຕິບັດການຕິດຕາມກິດຈະກໍາດັ່ງກ່າວເປັນໄລຍະໆ.<br>iv) ພັດທະນາຕົວຊີ້ວັດ ຂອງການຄືບໜ້າ ໂດຍອີງຕາມຈຸດປະສົງ ແລະ ເປົ້າໝາຍ ຂອງ ຍຸດທະສາດ ການໃຫ້ການສຶກສາຄວາມສ່ຽງໄພ ແຫ່ງຊາດ | - ຄຄຊ ໂດຍການຊຸກຍູ້ ຂອງຄະນະວິຊາການ ໃຫ້ການສຶກສາຄວາມສ່ຽງໄພ<br>- ຄຄຊ ໂດຍການຊຸກຍູ້ ຂອງຄະນະວິຊາການ ໃຫ້ການສຶກສາຄວາມສ່ຽງໄພ<br>- ໜ່ວຍງານ ໃຫ້ການສຶກສາຄວາມສ່ຽງໄພ ແລະ ໜ່ວຍງານໜ່ວຍງານ ຄໍ້າປະກັນ ຄຸນນະພາບ ຂອງ ຄຄຊ<br>- ຄຄຊ ແລະ ບັນດາສະມາຊິກຄະນະວິຊາການ ໃຫ້ການສຶກສາຄວາມສ່ຽງໄພ |

ທີ່ ວຽງຈັນ ວັນທີ 23/01/2008

ຫົວໜ້າຫ້ອງການ ຄຄຊ: ........................